

# ວິທີປູກພືດ ສວນຄົວ



## ແບບຊາວບ້ານ





ບຸນຊຸ່ນ ເພັດສຳພັນ

# ວິທີປູກພືດສວນຄົວແບບຊາວບ້ານ

ໂດຍ: ບຸນຊຽ່ນເພັດລຳພັນ

ພິສູດອັກສອນ: ຄະນະບັນນາທິການ: ສຳນັກພິມແສງສຸວັນ

ອອກແບບ - ຈັດໜ້າ ຈັດພິມໂດຍ: ສຳນັກພິມແສງສຸວັນ

ຈຳນວນພິມ: 2.000 ຫົວ

ຂະໜາດພິມ: 15 x 21 ຊມ, 112 ໜ້າ

ທະບຽນອະນຸຍາດ : 225 /ພຈ03052013

ພິມທີ່ : ດວງມາການພິມ

ພິມຄັ້ງທີ 1, ປີ 2013

© ສະຫງວນລິຂະສິດ

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ບຸນຊຽ່ນເພັດລຳພັນ

ວິທີປູກພືດສວນຄົວແບບຊາວບ້ານ / ບຸນຊຽ່ນ ເພັດລຳພັນ. -- ວຽງຈັນ: ສຳນັກພິມແສງສຸວັນ, 2013.

112 ໜ້າ: ພາບປະກອບສີ ; 21 ຊມ

1. ພືດສວນຄົວ. I. ຊື່ເລື່ອງ

635 -- dc21

ISBN 978-9932-404-82-7

ສຳນັກພິມແສງສຸວັນ SENGSOUVANH Publishing Co.,LTD

09 ຖະໜົນໜອງບົວທອງ, ບ້ານໂພນຄຳ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ. ລາວ, ໂທຕັ້ງໂຕະ ແລະ ໂທລະສານ : (856 21) 540344

ມືຖື : (856 20) 55607004, 55526028

Email: sengsouvanh_publishing@hotmail.com

# ບົດນຳ

ອາຫານນັບວ່າເປັນປັດໄຈທີ່ສຳຄັນທີ່ສຸດ ປະເພດໜຶ່ງ ເພາະຄົນເຮົາຕ້ອງການ ເພື່ອຈະເລີນເຕີບໂຕຂອງຮ່າງກາຍ ຊຶ່ງມະນຸດເຮົານຳມາປຸງເປັນອາຫານສຳລັບບໍລິໂພກໄດ້ ຫຼາຍລັກສະນະ ເຮົາອາດໃຊ້ທັງຕົ້ນ ຫຼື ສະເພາະສ່ວນໃດສ່ວນໜຶ່ງ ຫຼື ໃຊ້ຫຼາຍໆສ່ວນເປັນອາຫານ ເຊັ່ນ: ລຳຕົ້ນ, ໃບ, ຮາກ, ດອກ, ໝາກ ແລະ ເມັດ. ຜັກໂດຍທົ່ວໄປແລ້ວເປັນພືດລົ້ມລຸກ ຫຼື ອາຍຸສັ້ນ ບາງຊະນິດລຳຕົ້ນແຂງແຮງສາມາດຕັ້ງຊື່ງຕົວໄດ້ ບາງຊະນິດມັກເກາະ, ເປັນຕ້ອງມີໄມ້ຄ້າງ. ນອກຈາກນີ້ ຍັງມີໄມ້ຢືນຕົ້ນທີ່ມີຂະໜາດໃຫຍ່ ທີ່ເຮົາໃຊ້ ບາງສ່ວນເປັນຜັກ ເຊັ່ນ: ຜັກອີຮຸມ, ຜັກຫວານປ່າ, ໝາກຂີ້ຫູດ, ຕົ້ນກັນຖິນ, ຕົ້ນແຄ ແລະ ອື່ນໆ ອີກທີ່ໃຊ້ໝາກ, ສ່ວນໃບອ່ອນ ຫຼື ຍອດອ່ອນ ເປັນຜັກສົດໄດ້.

ການປູກພືດຜັກສວນຄົວເໝາະສົມຢ່າງຍິ່ງສຳລັບທຸກຄອບຄົວ ເຮັດໃຫ້ເກີດຄວາມສະບາຍໃຈໃນການບໍລິໂພກຜັກ ບໍ່ກັງວົນກ່ຽວກັບສານພິດຂອງຢາຂ້າແມງໄມ້, ຄວາມສະອາດ, ເຊັ່ນວ່າ: ໄດ້ຜັກສົດໄວ້ຮັບປະທານ, ໄວ້ປຸງອາຫານໄດ້, ໄດ້ຜັກທີ່ປອດສານພິດ ເຊັ່ນ: ຮູ້ຈັກເຮັດວຽກ; ຮູ້ຈັກທຳມະຊາດ ແລະ ໄດ້ອອກກຳລັງກາຍ ໃນຂະນະທີ່ປູກ ແລະ ການດູແລຮັກສາ ແລະໃຫ້ເກີດປະໂຫຍດ, ມີລາຍໄດ້ເພີ່ມຂຶ້ນ ເມື່ອນຳຜັກໄປຂາຍ, ແລະໄດ້ພືດ ສະໝຸນໄພຫຼາຍຊະນິດໄວ້ຮັກສາໂລກໄພໄຂ້ເຈັບ ເຊັ່ນ: ໝາກເຜັດ, ຂີງ, ຂ່າ, ກ້ານກ່ຳ ແລະ ຫົວສີໃຄ ເປັນຕົ້ນ. ທັງເປັນການປະຫຍັດຄ່າໃຊ້ຈ່າຍຂອງຄອບຄົວໃນແຕ່ລະວັນ.

01 ມິຖຸນາ 2013

ຜູ້ຮຽບຮຽງ

ສ.ສາຍຂຸນມີ



## ສາລະບານ


| | ໜ້າ |
|---|---|
| ການປູກຜັກກະລ່ຳປີ (Cabbage) | 6 |
| ກະລ່ຳປີແດງ (Red Cabbage) | 7 |
| ການປູກກະລ່ຳປີດອກ (Cauli Flower) | 9 |
| ຜັກກາດນາ (Chinese Kale) | 12 |
| ຜັກກາດຫົວ | 15 |
| ຜັກກາດຂາວ (Chinese Cabbage) | 18 |
| ຜັກກ້ານກ່ຳ ຫຼືຫອມລາບ (Kitchen mint) | 22 |
| ຜັກກະເສດ (water cress) | 26 |
| ຜັກກາດຂາວກວາງຕຸ້ງ (Kuang Futsoi) | 28 |
| ຂ່າ (Greater garangal) | 31 |
| ຂີງ (Ginger) | 33 |
| ໝາກເຂືອເພາະ (Eggplant) | 38 |
| ໝາກແຄ້ງ (Plante brush ຫຼື Common Asiatic weed) | 41 |
| ຜັກກະເພົາລົມ (Holy bacred basil) | 44 |
| ໝາກໃສ (Bttre Gourd) | 47 |
| ຜັກສະຫຼັດ | 50 |
| ຜັກຊີ | 52 |
| ຜັກແຊນບາລີ | 54 |
| ການປູກຜັກຕັງໂອ | 56 |






ຜັກຕຳລຶງ ( Ivy gourd ) 57
ໝາກແຕງກວາ (Cucumber ) 59
ໝາກຖົ່ວຍາວ (Yard long Bean) 62
ຖົ່ວເບີ (Common Bean) 65
ຖົ່ວພູ (Winged Bean) 68
ຖົ່ວດິນ (Sugar pea) 70
ໝາກນອຍ (Angled Loofah) 72
ຜັກນາງເລີດ (ອີ່ເລີດ) 74
ບູອກໂຄລີ (Broccoli) 78
ໝາກເລັ່ນ ( Tomato ) 81
ຫົວສີໃຄ 85
ຜັກຫອມປ້ອມ (Coriander) 87
ໝາກອຶ (Pumpkin) 89
ໜໍ່ໄມ້ຝັ່ງ (Asparagus) 91
ໝາກເຜັດຊີ້ຟ້າ Long cayenne pepper 96
ໝາກເຜັດຍອກ (Green chili) 99
ໝາກເຜັດຂີ້ໜູ (Hot chili) 102
ໝາກເຜັດໃຫ່ຍ ( Bell peppers ) 105
ໝາກໂມ (Watermelon) 108

ເອກະສານອ້າງອີງ 112



# ການປູກຜັກກະລໍ່າປີ

(Cabbage)

ກະລໍ່າປີ ເປັນຜັກທີ່ຢູ່ໃນຕະກຸນ Gruciferae ມີຊື່ທາງວິທະຍາສາດວ່າ: Brassicaolerceavar. capitataLinn. ໃນເມື່ອກ່ອນ ກະລໍ່າປີເປັນພືດເຂດອົບອຸ່ນເມເມດີເຕລານຽນ ແຖບຢູ່ໂຣບຕໍ່ມາຈຶ່ງແຜ່ລາມມາບ້ານເຮົາຊຶ່ງໃນສະໄໝກ່ອນກະລໍ່າປີ ປູກໄດ້ດີແຕ່ລະດູໜາວຕໍ່ມາມີການພັດທະນາສ້າງແນວພັນສໍາລັບເຂດຮ້ອນ ເໝາະສົມກັບສະພາບອາກາດບ້ານເຮົາ. ກະລໍ່າປີເປັນຜັກ ອາຍຸ 2 ປີ ແຕ່ປູກເປັນພືດອາຍຸປີດຽວ (Annual) ອາຍຸແຕ່ຍ້າຍປູກຈົນເຖິງ ເກັບກ່ຽວປະມານ 50-120 ວັນ ຂຶ້ນກັບແນວພັນດໍຫຼືປີ. ປູກໄດ້ຜົນດີໃນຊ່ວງ ເດືອນຕຸລາ-ມັງກອນ ກະລໍ່າປີສາມາດຂຶ້ນໄດ້ໃນດິນເກືອບທຸກສະນິດແຕ່ມັກດິນຊາຍແກມຕົມ ປະຕິກິລິຍາຂອງດິນ(pH) 6-6,5°C

**ແນວພັນ:** ກະລໍ່າປີສາມາດແຍກໄດ້ເປັນ 3 ກຸ່ມໃຫຍ່ຄື:

ກະລໍ່າປີທໍາມະດາ (Common cabbage): ກະລໍ່າປີສະນິດນີ້ມີຜູ້ປູກຫຼາຍແລະນິຍົມບໍລິໂພກ

ຫຼາຍມີລັກສະນະຫົວກົມ(ຕັ້ງແຕ່ກົມຫົວແຫຼມເປັນຮູບຫົວໃຈຈົນເຖິງກົມແພບຮາບມີສີຂຽວຫາຂຽວອ່ອນເປັນພັນທີ່ທົນຮ້ອນອາຍຸການເກັບກ່ຽວສັ້ນໄດ້ແກ່ພັນລູກປະສົມ King of Yield/ເຄວາຍ (ky)/ພັນລູກປະສົມ King of King \ເຄເຄ(KK) ພັນໂຄ ເປັນຮາເກັນຫຼືພັນໂກເດນເອເຄ ເປັນຕົ້ນ.



## ກະລໍ່າປີແດງ

(Red Cabbage)



ມີລັກສະນະຫົວຂ້ອນຂ້າງກົມ ມີສີແດງແກມສຊົມພູສ່ວນໃຫຍ່ມີອາຍຸການເກັບການເກັບກ່ຽວປານກາງແລະຍາວຕ້ອງການອາກາດໜາວ ເປັນພໍ່ສົມຄວນໄດ້ພັນລູກລູບີຄອນ, ລຸບີເພີເຟັກຊັນ(Rubyperfection).

ກະລໍ່າປີໃບຍົກ ( Savoy Cabbage)\var. sabauda L. ມີລັກສະນະໃບຍົກ ແລະ ເປັນຄື້ນຫຼາຍຕ້ອງການອາກາດໜາວເຢັນໃນຊ່ວງເວລາປູກ ແລະຊ່ວງໄລຍະການຈະເລີນເຕີບໂຕ ພືດສະນິດນີ້ແມ່ນນິຍົມປູກ ໃນເຂດໜາວ (ຢູໂຣບ, ອາເມລິກາເໜືອ)

### ການກຽມດິນ:

ຂຸດໄຖເລິກ 15-20 cm. ຕາກດິນໄວ້ປະມານ 5-10 ວັນ ປົນດວ້ຍຝຸ່ນຄອກຫຼືບົ່ມ. ຖ້າໜານກ້າເບ້ຍຕ້ອງທຸບໜ້າດິນໃຫ້ລາກງດເພື່ອບໍ່ໃຫ້ມີເມັດທີ່ມີຂະໜາດນອ້ຍຕົກເລິກລົງໄປໃນດິນຈະເຮັດໃຫ້ບໍ່ງອກ ແຕ່ຖ້າເປັນໜານປູກໃຫ້ທຸບດິນທໍາມະດາ ບໍ່ລະອຽດຫຼາຍກໍໄດ້.

**ການປູກ:** ເນື່ອງຈາກກະລໍ່າປີນິຍົມປູກໃນບ້ານເຮົາ ເປັນພັນດໍ ມີຊົງພຸ່ມ ແລະ ຫົວຂະໜາດນ້ອຍ ດັ່ງນັ້ນໃຊ້ໄລຍະປູກລະຫວ່າງຕົ້ນແລະແຖວປະມານ 40X40 cm. ການປູກອາດຈະປູກ ແບບແຖວຄູ່ກໍໄດ້.

### ການບົວລະບັດຮັກສາ:

**ການໃສ່ຝຸ່ນ:** ພືດດັ່ງກ່າວນີ້ຕອ້ງຝຸ່ນພໍສົມຄວນດັ່ງນັ້ນ ການກໍານົດຝຸ່ນເພື່ອນໍາໃຊ້ແມ່ນມີຄວາມຈໍາເປັນໃຫ້ຖືກຕອ້ງ ແນ່ໃສ່ການລຸດຕົ້ນທຶນການຜະລິດ

ແລະໃຫ້ມີປະສິດທິພົນສູງດ້ານການຜະລິດໂດຍສະເພາະດ້ານການຈະເລີນເຕີບໂຕທາງໃບແລະທາງກ້ານແລະລຳຕົ້ນແມ່ນມີຄວາມຈຳເປັນນຳໃຊ້ອາຫານຕົ້ນຕໍເຊັ່ນ: N ແລະ K ເພື່ອໃຊ້ໃນການສ້າງຈະເລີນເຕີບໂຕດັ່ງນັ້ນຝຸ່ນທີ່ແນະນຳໃຊ້ຄື: ສູດ. ດັ່ງນັ້ນ,ຈຶ່ງແນະນຳໃຫ້ໃຊ້ຝຸ່ນ N:P:K ສູດ 13-13-21 ຫຼືສູດທີ່ໃກ້ຄຽງກັນນີ້ໃນຈຳນວນ300kg\ha ໂດຍແບ່ງໃສ່3 ເທື່ອ: ເທື່ອທີ່ 1 ໃສ່ເຄິ່ງໜຶ່ງ ເປັນຝຸ່ນຮອງພື້ນຕອນປູກແລ້ວພອນດິນປົກ. ເທື່ອທີ2: ໃສ່ເມື່ອມີອາຍຸປະມານ10-20 ວັນຫຼັງຍ້າຍປູກຈຳນວນເຄິ່ງໜຶ່ງຈາກສ່ວນທີ່ເຫຼືອຄັ້ງທຳອິດພ້ອມນີ້ອາດເພີ່ມຝຸ່ນ ureaອີກ 60-80 kg\ha ເພື່ອເລັ່ງການຈະເລີນເຕີບໂຕລຳຕົ້ນແລະໃບ. ເທື່ອທີ່ 3 ໃສ່ເມື່ອອາຍຸ 20-30 ວັນ ຈາກສ່ວນທີ່ເຫຼືອທີ່ໄດ້ກຳນົດໄວ້ໃນເບື້ອງຕົ້ນນັ້ນ.

ການໃຫ້ນ້ຳ:ຄວນໃຫ້ພຽງພໍແຕ່ຢາໃຫ້ຈົນເກີນໄປໂດຍເບິ່ງຄວາມຊຸ່ມຊື່ນໃນໜານປູກ.

ການພອນດິນກຳຈັດຫຍ້າ: ຄວນເຮັດໃນໄລຍະທຳອິດເພື່ອເຮັດໃຫ້ດິນລຸລ່ວງຜູຜົງລະບາຍອາກາດແລະນ້ຳໄດ້ດີພ້ອມກັບການກຳຈັດຫຍ້າໄປພ້ອມໆກັນ. ເມື່ອຕົ້ນພືດມີໃບປົກຄຸມດິນແລ້ວບໍ່ຈຳເປັນເຮັດເລີຍ.

ການເກັບກ່ຽວ:

ອາຍຸເກັບກ່ຽວຂອງກະລໍ່າປີແຕ່ລະພັນບໍ່ຄືກັນສຳລັບພັນດໍທີ່ນິຍົມປູກໃນບ້ານເຮົາອາຍຸການເກັບກ່ຽວປະມານ 50-60 ວັນແຕ່ເປັນພັນປີມີອາຍຸເຖິງ 120 ວັນ.

# ການປູກກະລ່ຳປີດອກ

(Cauli Flower)



ກະລ່ຳປີດອກເປັນພືດຜັກທີ່ເຮົາໃຊ້ບໍລິໂພກພາກສ່ວນລຳຕົ້ນທີ່ຄ້າຍດອກຊຶ່ງມີລັກສະນະເປັນສີ ຂາວ. ແຕ່ກ່ອນຜັກຊະນິດນີ້ຕ້ອງປູກໃນເຂດໜາວ ແຕ່ໃນປະຈຸບັນການຄົ້ນຄ້ວາຈຶ່ງໄດ້ກະລ່ຳດອກພັນໃໝ່ ທີ່ສາມາດປູກໄດ້ທັງລະດູແລ້ງ ແລະ ລະດູຝົນ ແຕ່ໃຫ້ເປັນບ່ອນມີອາກາດ ໃນເວລາກາງຄືນເຢັນພໍສົມຄວນ.

## ລັກສະນະທົ່ວໄປ:

ກະລ່ຳດອກເປັນພືດໃນຕະກຸນ Cruciferae ຊື່ວິທະຍາສາດ: Brassica oleraceavar botrytis Linn.ສາມາດຂຶ້ນໄດ້ໃນດິນເກືອບທຸກຊະນິດ.ແຕ່ມັກດິນຮ່ວນປົນຊາຍມີຄວາມເປັນກົດເປັນດັ່ງ pH 6,5-6,7 ຫຼື ເປັນກົດອ່ອນ. ຕ້ອງການອຸນຫະພູມອາກາດໃນເວລາຈະເລີນເຕີບໂຕປະມານ 24°C.

## ພັນທີ່ໃຊ້ປູກ:

ການປູກກະລ່ຳດອກໃຊ້ພັນເອີລີໂນບອນ ຫຼືພັນອື່ນໆທີ່ມີອາຍຸສັ້ນເກັບກ່ຽວໄດ້ພາຍໃນ 60 ວັນປະຈຸບັນນີ້ມີເມັດພັນຂາຍທົ່ວໄປ ປູກກັນໄດ້ຕະຫຼອດປີ.

## ການຕຽມດິນ:

ການຕຽມດິນໜານກ້າ:ໃຫ້ຂຸດຫຼືໄຖເລິກປະມານ 10-15 ຊຕມ .ຕາກດິນໄວ້ປະມານ 5-7 ວັນ ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມໃຫ້ຫຼາຍຄົນເຂົ້າກັນໃຫ້ທົ່ວພອນ ແລະມອບດິນໃຫ້ລະອຽດຍົກເປັນໜານ.

ການຕຽມໜານປູກ: ກະລໍ່າດອກ ເປັນພືດທີ່ມີລະບົບຮາກຕື້ນການຕຽມດິນໃຫ້ເລິກປະມານ 15-20 ຊັງຕີແມັດ ຕາກດິນໄວ້ 7-10 ວັນ ໃສ່ຝຸ່ນບົ່ມຫຼືຝຸ່ນຄອກໃຫ້ຫຼາຍປົນດິນໃຫ້ລະອຽດ ເກັບຫຍ້າ ແລະ ເສດໄມ້ອອກໃຫ້ໝົດ ຍົກເປັນໜານຕຽມປູກຕໍ່ໄປ.

## ການປູກ:

ການກ້າແກ່ນ:ກະລໍ່າດອກຕ້ອງກ້າໃຫ້ອອກເປັນຕົ້ນກ້າ ອາຍຸປະມານ 1 ເດືອນແລ້ວຈຶ່ງຍ້າຍໄປປູກຢູ່ໜານ.ຫຼັງຈາກຕຽມດິນໜານກ້າແລ້ວ ໃຫ້ຫວ່ານເມັດທົ່ວພື້ນໜານ ແລ້ວຫວ່ານປົກ ຝຸ່ນຄອກ ຝຸ່ນບົ່ມຫຼືດິນລະອຽດໜາບໍ່ເກີນ 1 ຊມ ຫົດນໍ້າໃຫ້ຊຸ່ມ ແລະ ປົກດ້ວຍເຟືອງຫຼືຫຍ້າແຫ້ງ.ເມື່ອຕົ້ນກ້າມີໃບແທ້ ໃຫ້ຖອກແຍກຕົ້ນທີ່ບໍ່ສົມບຸນຫຼືຕົ້ນທີ່ບຽດສີກັນອອກ ພ້ອມທັງຈັດໄລຍະໃຫ້ຕົ້ນຫ່າງກັນປະມານ 5-10 ຊມ.

ການປູກລົງໜານ: ຫຼັງຈາກຕົ້ນກ້າມີໃບແທ້ຫຼືອາຍຸປະມານ 30 ວັນໃຫ້ຍ້າຍປູກຢູ່ໜານໂດຍໃຊ້ໄລຍະຫ່າງຕົ້ນຕໍ່ຕົ້ນ ປະມານ 40 ຊມ .ໄລຍະຫ່າງແຖວຕໍ່ແຖວ 60 ຊມ. ການປູກໃຫ້ຂູດຂູມກ້ວາງ 1,5 ຊມ. ເລິກ 10 ຊມ ແລ້ວຈຶ່ງນໍາຕົ້ນກ້າມາປູກລົງໃນຂຸມ ຖົມດິນບໍລິເວນຕົ້ນໃຫ້ແໜ້ນ ໃຊ້ເຟືອງຫຼືຫຍ້າແຫ້ງປົກຕົ້ນ ຫົດໃຫ້ຊຸ່ມ.ການຍ້າຍເບັ້ຍຄວນຍ້າຍຕອນບ່າຍຫຼືເວລາຟ້າບົດຢ່າໃຫ້ຮາກໄດ້ຮັບການກະທົບກະເທືອນ.

## ການບົວລະບັດຮັກສາ:

ຝຸ່ນທີ່ແນະນໍາໃຫ້ໃສ່ກັບກະລໍ່າດອກ ຄືຝຸ່ນ N:P:K ສູດ 15-15-15 ຫຼື





13-13-21 ຫຼືສູດອື່ນໆທີ່ໃກ້ຄຽງກັນນີ້ ໃສ່ອັດຕາ 300-600 ກລ ຂຶ້ນຢູ່ກັບຄວາມອຸດົມສົມບູນຂອງດິນ ການໃສ່ຝຸ່ນ ເທື່ອທີ່ 1 ໃສ່ເປັນຝຸ່ນຮອງພື້ນກ່ອນປູກ, ເທື່ອທີ່ 2 ໃສ່ຫຼັງຈາກປູກໄດ້ 30-40 ວັນໂຮຍຂ້າງຫ່າງຈາກຕົ້ນເລັກນ້ອຍແລ້ວພວນດິນປົກ.

ການໃຫ້ນ້ຳ: ເປັນພືດທີ່ຕ້ອງການຄວາມຊຸ່ມຊື່ນ ໃນດິນສູງໃນເວລາການຈະເລີນເຕີບໂຕ. ຄວນຫົດນ້ຳຢ່າງພຽງພໍ ແລະ ສະໝ່ຳສະເໝີທັງຕອນເຊົ້າແລະຕອນແລງ




ການຄຸມດິນ:(ປົບດິນ) ວັດຖຸທີ່ໃຊ້ໃນການປົບຄຸມດິນຄື:ເຟືອງແຫ້ງ ຫຼືຫຍ້າແຫ້ງ ນອກຈາກນັ້ນຍັງໃຊ້ອຸປະກອນອື່ນໆທີ່ຫາໄດ້ໃນທ້ອງຖິ່ນທີ່ມີລາຄາຖືກ ການປົກຄຸມດິນ ຈະເຮັດໃຫ້ດິນສາມາດ ເກັບຮັກສາຄວາມຊຸ່ມຊື່ນໄວ້ໄດ້ດີແລະເໝາະສົມແກ່ການຈະເລີນເຕີບໂຕທັງເປັນການຈຳກັດຫຍ້າອີກດ້ວຍ.

ການປ້ອງກັນ ແລະ ກຳຈັດຫຍ້າ:ຫຍ້າທຸກຊະນິດເປັນຕົວຍາດແຍ່ງອາຫານ ຈາກພືດທີ່ເຮົາປູກ.ຖ້າມີຫຍ້າຂຶ້ນຕ້ອງກຳຈດໄວ.ບໍ່ດັ່ງນັ້ນຈະລຳບາກ ແລະເສຍຄ່າໃຊ້ຈ່າຍເພີ່ມຂຶ້ນ.ການປ້ອງກັນແລະກຳຈັດຫຍ້າອາດໃຊ້ແຮງຄົນ ຫຼືກຫຼືໃຊ້ສານເຄມີກໍ່ໄດ້.

ການຄຸມດອກ:ເມື່ອດອກມີຂະໜາດເສັ້ນຜ່າສູນກາງ 5-7 ຊມ ຫຼື ດອກໃຫ້ຈົນໄດ້ຂະໜາດແລ້ວ ໃຫ້ຮວບໃບທີ່ຊານດອກ 3-4 ໃບເຂົ້າຫາກັນພຽງຫລົມໆ ແລ້ວມັດໄວ້ຈະເຮັດໃຫ້ດອກມີສີຂາວນວນ ເປັນໜ້າບໍລິໂພກ.

## ການເກັບກ່ຽວ:

ສຳຫຼັບພັນດໍ ແມ່ນນິຍົມປູກຢູ່ບ້ານເຮົາ ອາຍຸການເກັບກ່ຽວປະມານ 60 ວັນຫຼັງຈາກຫວ່ານກ້າ.ແຕ່ຖ້າເປັນພັນປີ ຕ້ອງໃຊ້ເວລາເຖິງ 90 ວັນ ຫຼືຫຼາຍກ່ວານີ້ເລັກນ້ອຍ.ກະລໍ່າດອກ ຄວນເລືອກເກັບຕອນດອກຍັງອ່ອນ ແຕ່ດອກໃຫ່ຍຄື:ໜ້າດອກພຽງ ເມື່ອດອກຈະພໍເກັບແລ້ວ ໃຫ້ເອົາໃບຄຸມອອກຫຼັງຈາກຄຸມດອກ 5-7 ວັນ ຫຼືຫຼາຍກ່ວານີ້ກໍ່ສາມາດເກັບກ່ຽວໄດ້. ໃຊ້ມີດຕັດຕົ້ນກະລໍ່າດອກໃຫ້ມີສ່ວນຂອງໃບ ບໍລິເວນໃກ້ດອກຕິດມານຳ 2-3 ໃບ ເພື່ອປ້ອງກັນດອກເສຍຫາຍໃນເວລາຂົນສົ່ງ.



# ຜັກກາດນາ

(Chinese Kale)

ຜັກກາດນາເປັນພືດທີ່ບໍລິໂພກ ສ່ວນຝບ ແລະ ລຳຕົ້ນ. ເປັນຜັກທີ່ນິຍົມບໍລິໂພກທົ່ວໄປ ໂດຍສະເພາະແມ່ນນຳໃຊ້ນຳຮ້ານອາຫານຕ່າງໆ, ຜັກກາດນາ ມີຖິ່ນກຳເນີດໃນ ທະວີບອາຊີ ແລະ ມີປູກຫຼາຍໃນປະເທດອາຊີຕາເວັນອອກສ່ຽງໃຕ້ ເຊັ່ນ: ຈີນ, ໃຕ້ຫວັນ, ມາເລເຊຍ, ສປປ ລາວ, ໄທ ແລະອື່ນໆ.

## ລັກສະນະທົ່ວໄປ:

ຜັກກາດນາເປັນພືດທີ່ຈັດເຂົ້າໃນຕະກຸນ Cruciferae ມີຊື່ທາງວິທະຍາສາດວ່າ Brassica alboglabra Bailey. ຜັກກາດນາເປັນຜັກອາຍຸ 1 ປີ ແຕ່ປູກເປັນຜັກອາຍຸປີດຽວ(Annual). ອາຍຸຕັ້ງແຕ່ຫວ່າງຫຼືຍອດເມັດເຖິງເກັບກ່ຽວ ປະມານ 45-55 ວັນ ຜັກກາດນາສາມາດປູກໄດ້ຕະຫຼອດປີ ແຕ່ຊ່ວງເວລາທີ່ປູກໄດ້ດີແມ່ນຊ່ວງເດືອນ ຕຸລາ- ເມສາ. ຜັກກາດນາສາມາດເກີດໃນດິນເກືອບທຸກຊະນິດ ມີຄວາມອຸດົມສົມບູນສົມຄວນ ປະຕິກິລິຍາຂອງດິນ PH 5.5-6.8 ມີຄວາມຊຸ່ມຊື່ນໃນດິນສູງ ສະໝ່ຳສະເໝີ.

## ພັນທີ່ໃຊ້ປູກ:

ພັນ ທີ່ນິຍົມ ປູກ ໃນບ້ານ ເຮົາເປັນຜັກກາດນາຂາວຊຶ່ງປະກອບມີ:



ພັນໃບມົນ:ລັກສະນະໃບກ້ວາງ, ປ້ອງສັ້ນ, ປາໃບມົນ, ໜ້າໃບເປັນຫຍໍ່ເລັກນ້ອຍ.



ພັນໃບແຫຼມ: ລັກສະນະໃບແຄບ, ປາຍໃບແຫຼມ, ປ້ອງຫ່າງ, ຂໍ້ຫ່າງ, ໜ້າໃບລຽບ.

ພັນກ້ານ: ລັກສະນະໃບແຫຼມ, ແຕ່ຈຳນວນໃບຕໍ່ຕົ້ນມີຈຳນວນໜ້ອຍກວ່າປ້ອງຍາວ.

ການຕຽມດິນ:

ການກ້າເບ້ຍ ແລະ ການຍ້າຍເບ້ຍ: ຫຼັງຈາກຕຽມດິນໜານກ້າແລ້ວໃຫ້ຫວ່ານເມັດພັນໃຫ້ກະຈາຍທົ່ວໜານ ປົກດ້ວຍຝຸ່ນບົ່ມ ຫຼື ຝຸ່ນຄອກໜາປະມານ 0.5 -1 ຊມ. ສຳເລັດແລ້ວຫົດນຳດ້ວຍບົວຝອຍລະອຽດ ແລ້ວປົກດ້ວຍເຟືອງບາງໆ

ການປູກລົງໜານ: ການຕຽມດິນໃຫ້ໄຖ-ຂຸດ ເລິກປະມານ 20-30 ຊຕມ. ພວນ ແລະ ຍ່ອງດິນໃຫ້ລະອຽດ ປະສົມຝຸ່ນຄອກ ຫຼື ຝຸ່ນບົ່ໃຫ້ລະອຽດ ແລ້ວຢອດເມັດລົງເທິງໜ້າໜານ ໂດຍໃຊ້ໄລຍະຫ່າງລະຫວ່າງຈຸດ/ຈຸດ 25 ຊມ; ແຖວ/ແຖວ 40 ຊຕມ, ຢອດເມັດຈຸດລະ 3-5 ເມັດ ເອົາດິນປົກໜ້າ 0.5 ຊຕມ. ເມື່ອຕົ້ນເບ້ຍອາຍຸໄດ້ 15-20 ວັນ ຖອນແຍກໃຫ້ໄດ້ສຸມລະ 1 ຕົ້ນ.

ການບົວລະບັດຮັກສາ:

ການໃສ່ຝຸ່ນ: ພືດດັ່ງກ່າວນີ້ຕ້ອງການຝຸ່ນພໍສົມຄວນ ດັ່ງນັ້ນ ການກຳນົດຝຸ່ນເພື່ອນຳໃຊ້ແມ່ນມີຄວາມຈຳເປັນໃຫ້ຖືກຕ້ອງ ແນໃສ່ຫຼຸດຕົ້ນທຶນການຜະລິດ ແລະ ປະສິດທິຜົນສູງດ້ານຜົນຜະລິດ ໂດຍສະເພາະ ດ້ານການຈະເລີນເຕີບໂຕທາງໃບ ແລະ ລຳຕົ້ນຫຼືກ້ານ. ດັ່ງນັ້ນ, ຈຶ່ງແນະນຳໃຫ້ໃຊ້ຝຸ່ນ N:P:K ສູດ 20:11:11 ຫຼື 16:8:8 ຫຼືສູດທີ່ໃກ້ຄຽງນີ້ ໃນອັດຕາ 300-600 ກິໂລ/ເຮັກຕາ ໂດຍແບ່ງໃສ່ 3 ເທື່ອ: ເທື່ອທີ່ 1 ໃສ່ເຄິ່ງໜຶ່ງ ເປັນຝຸ່ນຮອງພື້ນຕອນປູກແລ້ວພວນດິນປົກ. ເທື່ອທີ່ 2 ໃຫ້ໃສ່ເມື່ອພືດມີອາຍຸ 10-20 ວັນ ຈຳນວນເຄິ່ງໜຶ່ງສ່ວນທີ່ຍັງເຫຼືອທຳອິດ ພ້ອມນີ້ອາດເພີ່ມ ຢູເຣຍ 80-150 ກລ/ຮຕ ເພື່ອເລັ່ງການຈະເລີນເຕີບໂຕລຳຕົ້ນ ແລະ ໃບ, ເທື່ອ 3 ເມື່ອອາຍຸ 25-30 ວັນ ຈາກສ່ວນທີ່ເຫຼືອທີ່ກຳນົດໄວ້ໃນເບື້ອງຕົ້ນນັ້ນ.

ການໃຫ້ນ້ຳ: ຄວນໃຫ້ຢ່າງພຽງພໍ ແຕ່ຢ່າໃຫ້ຈົນປຽກເກີນໄປ ໂດຍເບິ່ງຄວາມຊຸ່ມໃນໜານປູກ.

ການພວນດິນກຳຈັດຫຍ້າ: ຄວນເຮັດໃນໄລຍະທຳອິດເພື່ອເຮັດໃຫ້ດິນລຸໂລ່ງຟຸຟົງ ລະບາຍອາກາດ ແລະ ນຳໄດ້ດີ ພ້ອມກັບການກຳຈັດຫຍ້າໄປພ້ອມກັນ. ເມື່ອຕົ້ນພືດມີໃບປົກຄູມດິນແລ້ວ ບໍ່ຈຳເປັນເຮັດເລີຍ.

ການເກັບກ່ຽວ:

ຜັກກາດນາ ເປັນພືດທີ່ປູກໃນບ້ານເຮົາມີອາຍຸເກັບກ່ຽວ 45-55 ວັນຫຼັງຈາກປູກ ຊຶ່ງເປັນຜັກກາດນາທີ່ໃຫຍ່ເຕັມທີ່.ນອກຈາກນີ້ ເຮົາຍັງໄດ້ຜັກກາດນາອ່ອນ ຫຼື ຮ້ອງວ່າ ຍອດຜັກກາດນາ ຊຶ່ງໄດ້ຈາກການຖອນແຍກ ເວລາອາຍຸປະມານໄດ້ 30 ວັນ.





# ຜັກກາດຫົວ



ຜັກກາດຫົວ ເປັນພືດຜັກ ທີ່ເຮົາໃຊ້ປູກເພື່ອບໍລິໂພກພາກສ່ວນຮາກທີ່ຂະຫຍາຍໃຫຍ່ຂື້ນ, ເນື້ອມີສີຂາວ ທານໄດ້ຫຼາຍຢ່າງ ເຊັ່ນ: ປະເພດແກງຈືດ. ຜັກກາດຫົວເປັນພືດທີ່ມີຖິ່ນກຳເນີດໃນທະວີບອາຊີ ປູກຫຼາຍໃນປະເທດຈີນ, ຍີ່ປຸ່ນ ແລະ ໄທ.

## ລັກສະນະທົ່ວໄປ:

ຜັກກາດຫົວເປັນພືດຜັກຢູ່ໃນຕະກຸນ Cruciferae ມີຊື່ວິທະຍາສາດວ່າ: Raphanussativusvar. longipinnatus Linn. ເປັນພືດຜັກລົ້ມລຸກ ມີອາຍຸ ສັ້ນປີດຽວ ( Annual ) ອາຍຸຕັ້ງແຕ່ຢອດເມັດເຖິງເກັບກ່ຽວປະມານ 42 – 60 ວັນ, ຮາກຂະຫຍາຍເປັນຫົວສີຂາວຈະເລີນເຕີບໂຕເທິງໜ້າດິນເລັກນ້ອຍ, ສ່ວນທີ່ເຫຼືອຈະເລີນເຕີບໂຕໃນດິນ ລັກສະນະຂອງຫົວແຕກຕ່າງກັນເຊັ່ນ: ເປັນຮູບຊົງບັ້ງ, ຮູບຊົງກົມ, ຮູບກ້ວຍຍາວ ຫຼື ອື່ນໆ. ທັງໝົດຂຶ້ນຢູ່ກັບລັກສະນະປະຈຳພັນແຕ່ລະພັນ. ຜັກກາດຫົວສາມາດເຕີບໂຕໃນດິນເກືອບທຸກຊະນິດ ແຕ່ມັກດິນທ່າງປົນຊາຍ ປະຕິກິລິຍາຂອງດິນ(PH) 5,8 – 6,8 ຫຼື ເປັນກົດເລັກນ້ອຍ, ມີຄວາມຊຸ່ມໃນດິນສູງພໍສົມຄວນ. ບ້ານເຮົາສາມາດປູກໄດ້ຕະຫຼອດປີ ແຕ່ຊ່ວງເວລາເໝາະສົມ ຄື: ຊ່ວງເວລາທີ່ມີອຸນຫະພູມ 18 – 24 ອົງສາເຊ ຫຼື ລະຫວ່າງເດືອນຕຸລາ (10) ຫາ ເດືອນມັງກອນ(1).

## ພັນທີ່ໃຊ້ປູກ:

ພັນທີ່ນິຍົມປູກໃນບ້ານເຮົາ ສ່ວນຫຼາຍເປັນພັນດໍ ເຊັ່ນພັນ: ເຄຢູ 1 ແລະ ພັນອື່ນໆ

### ການຕຽມດິນ:

ເນື່ອງ ຈາກຜັກກາດຫົວ ເປັນພືດທີ່ມີຮາກເລິກ ຄວນຂຸດຮາກເລິກ ປະມານ 60 ຊມ. ຕາກດິນໄວ້ 7-10 ວັນ ແລ້ວໃສ່ດ້ວຍຝຸ່ນຄອກ ຫຼືຝຸ່ນບົ່ມ ຄົນເຂົ້າກັນໃຫ້ທົ່ວ, ພວນດິນໃຫສະອາດ, ເກັບຫຍ້າ ແລະ ສິ່ງເສດເຫຼືອອອກ ຍົກໜ້າດິນຂື້ນໃຫ້ເປັນໜານໆ.

### ການປູກ:

ໄລຍະຫ່າງທີ່ເໝາະສົມລະຫວ່າງຂຸມຫ່າງກັນປະມານ 25 ຊຕມ. ຫຼັງ ຈາກຕຽມດິນແລ້ວ ໃຫ້ເຮັດຂຸມນ້ອຍໆ ແລ້ວຢອດເມັດໃນຂຸມ ໆລະ 3-5 ເມັດ ປົກດິນໜາປະມານ 0.5 ຊຕມ. ຫົດນໍ້າໃຫ້ຊຸ່ມ ແລ້ວປົກດ້ວຍເຟືອງແຫ້ງ ຫຼື ຫຍ້າແຫ້ງ ເພື່ອຮັກສາຄວາມຊຸ່ມຂອງດິນໃນເບື້ອງຕົ້ນ ຫຼັງຈາກເບ້ຍງອກ ປະມານ 15 ວັນ ຫຼື ມີໃບແທ້ 2-3 ໃບ ຄວນຖອນແຍກໃຫ້ເຫຼືອຂຸມລະ 1 ຕົ້ນ.

### ການບົວລະບັດຮັກສາ:

ການໃສ່ຝຸ່ນ: ຝຸ່ນທີ່ແນະນໍາໃຫ້ໃສ່ ຄືຝຸ່ນ: N:P:K ສູດ 15-15-15 ຫຼື 16-16-21 ຫຼື ສູດອື່ນໆທີ່ໃກ້ຽງກັນນີ້. ໃສ່ໃນອັດຕາ 300-600 ກລ ຂື້ນຢູ່ກັບ ຄວາມອຸດົມສົມບູນຂອງດິນ. ການໃສ່ຝຸ່ນ ເທື່ອທີ່ 1 ໃສ່ເປັນຝຸ່ນຮອງພື້ນກ່ອນ ປູກ, ເທື່ອທີ່ 2 ຫຼັງຈາກປູກໄດ້ 30-40 ວັນ ໂຮຍຂ້າງຈາກຕົ້ນເລັກນ້ອຍ ພວນດິນ ປົກຫຼັງຈາກປູກໂດຍໃສ່ແບບໂຮຍຂ້າງຕົ້ນກ່ອນແລ້ວພວນດິນປົກ. ນອກຈາກນີ້ ຍັງໃສ່ຝຸ່ນເພີ່ມ ອື່ນໆ ເຊັ່ນ: ຝຸ່ນແອມໂມເນຍຊຸນເຟດ ຫຼື ຢູເຣຍ ໃນຊ່ວງການຈະ ເລີນເຕີບໂຕ. ເທື່ອທີ່ 2 ໃສ່ຕອນພືດມີອາຍຸປະມານ 20-85 ວັນ ໂດຍໃສ່ ແບບໂຮຍຂ້າງຕົ້ນ ແລ້ວພວນດິນປົກ. ນອກຈາກນີ້ ໄລຍະທໍາອິດຂອງການຈະ ເລີນເຕີບໂຕ ອາດຈະໃສ່ ຝຸ່ນທີ່ແນະນໍາໃສ່ສູດ 13-13-21 ຫຼື 15 -15-15 ໃນ ອັດຕາ 300-600 ກິໂລ/ເຮັກຕາ ທັງນີ້ຂື້ນຢູ່ກັບຄວາມອຸດົມສົມບູນຂອງດິນ. ໃຫ້ແບ່ງໃສ່ 2 ເທື່ອ: ເທື່ອທີ່ 1 ໃສ່ຕອນປູກຮອງພື້ນແລ້ວພວນປົກລົງໃນດິນ, ເພີ່ມອີກກໍ່ໄດ້ເຊັ່ນ: ຢູເຣຍ ຫຼື ແອມໂມເນຍໄນເຕຼດ ຈໍານວນ 60 ກິໂລ/ເຮັກຕາ ເພື່ອເລັ່ງການຈະເລີນເຕີບໂຕໃນເບື້ອງຕົ້ນ.

ການໃຫ້ນໍ້າ: ຄວນໃຫ້ນໍ້າຢ່າງສະໝໍ່າສະເໝີແລະພຽງພໍທັງເຊົ້າ ແລະ ແລງ, ຖ້າຜັກກາດຫົວຂາດນໍ້າ ຈະເຮັດໃຫ້ຂະໜາດຂອງຄຸນນະພາບຫຼຸດລົງໄປ.

ການພອນດິນ: ຄວນເຮັດຕອນທີ່ຫຍ້າຍັງມີໜ້ອຍ ແລະ ຕົ້ນຜັກກາດຫົວຍັງນ້ອຍຢູ່ ນອກຈາກນີ້ ຄວນເຮັດດ້ວຍຄວາມລະມັດລະວັງ ຢ່າໃຫ້ໃກ້ຕົ້ນເກີນໄປ ເພາະຈະເຮັດໃຫ້ກະທົບກະເທືອນເຖິງຮາກໄດ້.

ການເກັບກ່ຽວ:

ຜັກກາດຫົວສ່ວນໃຫຍ່ເປັນພັນດໍ ມີອາຍຸເກັບກ່ຽວ 42-60 ວັນ ແຕ່ຖ້າເປັນພັນປີແມ່ນຫຼາຍກວ່ານີ້. ຫຼັງຈາກຜັກກາດຫົວມີອາຍຸເກັບກ່ຽວ ໃຫ້ຟ້າວເກັບມ້ຽນທັນທີ ຢ່າປ່ອຍໃຫ້ກາຍອາຍຸເກັບກ່ຽວ ເພາະຈະເຮັດໃຫ້ຄຸນນະພາບຂອງຫົວຫຼຸດລົງ, ລົດຊາດບໍ່ດີ, ດິນໜຽວ ແລະ ນໍ້າໜັກໜ້ອຍ.





# ຜັກກາດຂາວ

(Chinese Cabbage)

ຜັກກາດຂາວ ເປັນຜັກຢູ່ໃນຕະກຸນ Cruciferae ມີຊື່ທາງວິທະຍາສາດວ່າ Brassica penkinensis (Lour) ມີຖິ່ນກຳເນີດໃນທະວີບອາຕາເວັນອອກສຽງໃຕ້ ມີປູກຫຼາຍໃນປະເດຈີນຕອນໃຕ້, ໃຕ້ຫວັນ, ຫວຽດນາມ, ສ ປ ປ ລາວ, ໄທ. ຜັກຊະນິດນີ້ ເປັນທີ່ນິຍົມຂອງຄົນສ່ວນຫຼາຍ ໂດຍບໍລິໂພກພາກສ່ວນໃບເປັນຜັກສົດ ຫຼື ໃຊ້ປະກອບເປັນອາຫານອື່ນໆ.

## ລັກສະນະທົ່ວໄປ:

ຜັກກາດຂາວມີຊື່ເອີ້ນກັນຫຼາຍຊື່ white Cabbage. Celery Cabbage, Peking cabbage. ຜັກກາດຂາວເປັນຜັກທີ່ມີອາຍຸປີດຽວ (Annual) ໃນບ້ານເຮົາສາມາດປູກໄດ້ຕະຫຼອດປີ ແຕ່ປູກໄດ້ດີທີ່ສຸດແຕ່ເດືອນ ຕຸລາ-ກຸມພາ ຈະເລີນເຕີບໂຕໄດ້ໃນດິນເກືອບທຸກຊະນິດ ແຕ່ດິນທີ່ເໝາະສົມທີ່ສຸດແມ່ນດິນຊາຍແກມຕົມທີ່ມີຄວາມອຸດົມສົມບຸນສູງປະຕິກິລິຍາຂອງດິນ (PH) 6,0-6.8 ພືດນີ້ຕ້ອງການຄວາມຊຸ່ມຊື່ນຂອງດິນຕ້ອງສູງ ຕະຫຼອດລະດູປູກ ຕ້ອງການຮັບແສງແດດຕະຫຼອດວັນ ອຸ່ນຫະພູມເໝາະສົມ 15-22 °C

## ແນວພັນ:

ພັນຜັກກາດຂາວທີ່ໃຊ້ປູກໃນບ້ານເຮົາ ມີ 3 ປະເພດໃຫຍ່ໆ ຄື:

ຜັກຂາວປີຍາວ: ລັກສະນະສູ=ຮູບໄຂ່ (ພັນ ມີຊີລີຫຼືຜັກກາດທົ່ງ, ຜັກກາດຂາວປີຝຣັ່ງ).

ຜັກຂາວປີກົມແໜ້ນ: ລັກສະນະສັ້ນອ້ວນກົມ (ຊາລາເດຍ, ຊົງປີຄອນ ແລະອື່ນໆ).



ພັນຂາວປີຫຼີນ: ເປັນຜັກກາດທີ່ ໃຊ້ ປູກທົ່ວໄປ ໃນບ້ານ ເຮົາ ເຊັ່ນ: ຜັກກາດຂາວໃຫຍ່, ຜັກກາດຂາວທຳມະດາ ຊຶ່ງເໝາະສຳລັບເຂດທີ່ມີອຸ່ນພຸມສູງ, ຝົນຕົກດີ.

ການຕຽມດິນ:

ໜານກ້າ: ໄຖ-ຂຸດດິນໃຫ້ດີ ຕາກໄວ້ 5-7 ວັນ ເພື່ອຂ້າເຊື້ອພະຍາດໃນດິນ. ຫຼັງຈາກນັ້ນໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມ ທີ່ລະລາຍຕົວດີແລ້ວໃຫ້ຫຼາຍພວນ-ຍ້ອງດິນໃຫ້ລະອຽດ ໂດຍສະເພາະໜ້າດິນເພື່ອປ້ອງກັນບໍ່ໃຫ້ເມັດ ຊຶ່ງມີຂະໜາດນ້ອຍລົງໄປໃນດິນເລິກ.

ໜານປູກ: ຜັກກາດຂາວເປັນຜັກທີ່ມີລະບົບຮາກຕື້ນ ຄວນໄຖເລິກປະມານ 15-20 ຊຕມ. ຕາກດິນໄວ້ 5-7 ວັນ ປະສົມຝຸ່ນບົ່ມຫຼືຝຸ່ນຄອກ ພຸນດິນໃຫ້ລະອຽດ.

24 / VII

ການປູກ:

ປູກ ແບບ ຫວ່ານ ເມັດພັນ ໃຫ້ກະຈາຍ ທົ່ວ ໜານ: ຊຶ່ງການ ປູກ ແບບ ນີ້ ເໝາະ ສຳລັບ ເມັດພັນລາຄາຖືກ ຄວນຫວ່ານ ໃຫ້ເມັດກະຈາຍສະໝ່ຳສະເໝີ ເນື່ອງຈາກເມັດຜັກດັ່ງກ່າວເປັນເມັດທີ່ນ້ອຍ ຄວນເອົາເມັດພັນປົນກັບດິນຊາຍກ່ອນຫວ່ານ ເພື່ອໃຫ້ເມັດກະຈາຍສະໝ່ຳສະເໝີ. ໃຊ້ຝຸ່ນບົ່ມຫຼືຝຸ່ນຄອກຫວ່ານທັບລົງໄປໜາປະມານ 0.5-1 ຊຕມ. ເພື່ອຊ່ວຍຮັກສາຄວາມຊຸ່ມແລ້ວປົກເຟືອງອີກຊັ້ນໜຶ່ງ ຫົດນ້ຳດ້ວຍບົວລະອຽດທົ່ວໜານ ຫຼັງຈາກຕົ້ນກ້າງອກ ແລະ ມີໃບແທ້ 1-2 ໃບຈະເລີ່ມ ມີຮາກ, ໃຫ້ຖອນແຍກເພື່ອຈັດໄລຍະປູກໃຫ້ໄດ້ລະຫວ່າງຕົ້ນ 50x50 ຊຕມ.

ການປູກແບບໂຮຍເປັນແຖວ ຫຼືຢອດເປັນຂູມ: ໃຫ້ໂຮຍເມັດໜ້າໜານແລ້ວກົບດ້ວຍຝຸ່ນຄອກຫຼືຝຸ່ນບົ່ມທີ່ສະລາຍຕົວດີແລ້ວ ໜາປະມານ 0.5-1 ຊມ, ເລິກປະມານ 0.5-1 ຊຕມ. ເມັດຄວນໂຮຍໃຫ້ຫ່າງ ກັນພໍສົມຄວນແລ້ວປົກດ້ວຍຝຸ່ນບົ່ມຫຼືຝຸ່ນຄອກ ທີ່ສະຫຼາຍຕົວດີແລ້ວ ຫົດດ້ວຍນ້ຳບົວຜອຍລະອຽດທົ່ວໜານ,



ປົກໜ້າໜານດ້ວຍເຟືອງແຫ້ງບາງໆ ເພື່ອຊ່ວຍເກັບຮັກສາຄວາມຊຸ່ມໃນດິນ ແລະ ປ້ອງກັນການກະທົບຂອງນ້ຳຕໍ່ຕົ້ນກ້າທີ່ຍັງນ້ອຍຢູ່. ການຍ້າຍເບ້ຍຄວນຍ້າຍຕອນບ່າຍ ຫຼື ຕອນຟ້າບົດ. ເບ້ຍທີ່ເໝາະສົມໃນການຍ້າຍປູກຄວນມີອາຍຸ 30-35 ວັນ.

## ການບົວລະບັດຮັກສາ:

ການໃສ່ຝຸ່ນ: ເນື່ອງຈາກຜັກກາດຂາວເປັນຜັກກິນໃບ ຕ້ອງການຝຸ່ນຫຼາຍພໍສົມຄວນ ດັ່ງນັ້ນການກຳນົດຝຸ່ນເພື່ອນຳໃຊ້ແມ່ນມີຄວາມຈຳເປັນໃຫ້ຖືກຕ້ອງແນໃສ່ລົດຕົ້ນທຶນການຜະລິດ ແລະ ໃຫ້ມີປະສິດທິຜົນສູງດ້ານຜົນຜະລິດ ໂດຍສະເພາະດ້ານການຈະເລີນເຕີບໂຕທາງໃບ ແລະ ລຳຕົ້ນ. ດັ່ງນັ້ນ, ຈຶ່ງແນະນຳໃຫ້ໃຊ້ຝຸ່ນ N:P:K 10-22-22 ຫຼື 16-8-8 ຫຼື ສູດທີ່ໃກ້ຄຽງກັນນີ້ ໃນຈຳນວນ 300-600 ກິໂລ/ເຮັກຕາ ໂດຍແບ່ງໃສ່ 3 ເທື່ອ: ເທື່ອທີ່ 1 ໃສ່ເຄິ່ງໜຶ່ງ ເປັນຝຸ່ນຮອງພື້ນຕອນປູກແລ້ວພອນດິນປົກ. ເທື່ອທີ່ 2 ໃຫ້ໃສ່ເມື່ອພືດມີອາຍຸ 10-20 ວັນຈຳນວນເຄິ່ງໜຶ່ງສ່ວນທີ່ຍັງເຫຼືອທຳອິດ ພ້ອມນີ້ອາດເພີ່ມ ຢູເຣຍ 80-150 ກລ/ຮຕ ເພື່ອເລັ່ງການຈະເລີນເຕີບໂຕ, ເທື່ອ 3 ເມື່ອອາຍຸ 25-30 ວັນ ຈາກສ່ວນທີ່ເຫຼືອທີ່ກຳນົດໄວ້ໃນເບື້ອງຕົ້ນນັ້ນ.

ການໃຫ້ນ້ຳ: ຄວນໃຫ້ຢ່າງພຽງພໍ ແຕ່ຢ່າໃຫ້ຈົນປຽກເກີນໄປ ໂດຍເບິ່ງຄວາມຊຸ່ມໃນໜານປູກ.

ການພອນດິນກຳຈັດຫຍ້າ: ຄວນເຮັດໃນໄລຍະທຳອິດເພື່ອເຮັດໃຫ້ດິນລຸໂລ່ງຟຸຟົງ ລະບາຍອາກາດ ແລະ ນຳໄດ້ດີ ພ້ອມກັບການກຳຈັດຫຍ້າໄປພ້ອມກັນ. ເມື່ອຕົ້ນພືດມີໃບປົກຄຸມດິນແລ້ວ ບໍ່ຈຳເປັນເຮັດເລີຍ.

## ການເກັບກ່ຽວ:

ໃຫ້ໃຊ້ມີດຄົມໆຕັດທີ່ເຫງົ້າຕົ້ນ ຕັດແຕ່ງໃບທີ່ເປັນພະຍາດຫຼືຖືກແມງກັດອອກ ຄວນປະໃບນອກໄວ້ ເພື່ອປ້ອງກັນການກະທົບໃນເວລາຂົນສົ່ງ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ